# ສູນຂໍ້ມູນຂ່າວສານ

## ທາງດ້ານການຄ້າດ້ານບໍລິການຂອງ ສປປ ລາວ

## ສະດວກ, ເຂົ້າເຖິງງ່າຍ, ແລະ ມີຄວາມໂປ່ງໃສ




**www.laoservicesportal.gov.la**

### ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການແມ່ນຫຍັງ?

ແມ່ນສູນຂໍ້ມູນຂ່າວສານທີ່ປະກອບດ້ວຍຂໍ້ມູນກ່ຽວກັບນິຕິກຳ, ມາດຕະການ, ຂັ້ນຕອນ, ແບບຟອມ,ຂໍ້ຜູກພັນທາງດ້ານການຄ້າ, ຂ່າວສານ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບການຄ້າດ້ານບໍລິການຂອງ ສປປ ລາວທີ່ຜູ້ນຳໃຊ້ເວັບໄຊທ໌ສາມາດເບິ່ງ ແລະ ດາວໂຫຼດມາເກັບໄວ້ໄດ້.

ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ຈະອຳນວຍຄວາມສະດວກແກ່ບັນດາຜູ້ປະກອບການ ແລະ ນັກລົງທຶນພາຍໃນ ແລະ ຕ່າງປະເທດ ໃນການຊອກຫາຂໍ້ມູນຂ່າວສານ, ບັນດາຂໍ້ກຳນົດ, ກົດໝາຍ ແລະ ລະບຽບການຕ່າງໆທີ່ຈຳເປັນສຳລັບ

ປະຈຸບັນ, ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ມີທີ່ຕັ້ງຢູ່ ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ.




### ວັດຖຸປະສົງໃນການສ້າງ ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ

ວັດຖຸປະສົງຫຼັກໃນການສ້າງສູນຂໍ້ມູນຂ່າວສານດັ່ງກ່າວນີ້ຂຶ້ນມາແມ່ນເພື່ອເປັນການປະກອບສ່ວນສຳຄັນອັນໜຶ່ງໃນການພັດທະນາວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໂດຍສະເພາະແມ່ນຂະແໜງການຄ້າດ້ານບໍລິການຂອງ ສປປ ລາວ ເພື່ອເຮັດໃຫ້ໃຫ້ການເຂົ້າເຖິງຂໍ້ມູນທີ່ຈຳເປັນມີຄວາມສະດວກສະບາຍໂດຍຜ່ານລະບົບອີເລັກໂທຣ ນິກ, ມີຄວາມໂປ່ງໃສ ແລະ ທັນກັບສະພາບການ. ພ້ອມກັນນັ້ນ, ຍັງເປັນການປະຕິບັດພັນທະຂອງ ສປປ ລາວ ຕໍ່ການເຂົ້າເປັນພາຄີຂອງສັນຍາໃນຂອບພາກພື້ນ ແລະ ສາກົນ ໂດຍສະເພາະພາຍຫຼັງທີ່ ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ກໍ່ມີພັນທະໃນການຈັດຕັ້ງປະຕິບັດຕາມມາດຕາ III ຂອງ ຂອງສັນຍາ GATS ທີ່ກ່ຽວຂ້ອງກັບການເຜີຍແຜ່ຂໍ້ມູນຂ່າວຂ່າວສານທາງດ້ານການຄ້າສູ່ສາທາລະນະຊົນ.



## ພາບລວມຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ

ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ສາມາດນຳໃຊ້ www.laoservicesportal.gov.la ເຊິ່ງເວັບໄຊທ໌ດັ່ງກ່າວມີສອງພາສາຄື: ລາວ ແລະ ອັງກິດໃຫ້ເລືອກໃຊ້ໄດ້.

ພາຍໃນສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການແຫ່ງນີ້ ຜູ້ນຳໃຊ້ສາມາດຄົ້ນຫາຂໍ້ມູນໄດ້ຫຼາຍປະເພດເຊັ່ນ:

ຂໍ້ມູນກ່ຽວກັບນິຕິກຳ: ປະກອບດ້ວຍ ກົດໝາຍ, ລັດຖະດຳລັດ, ດຳລັດ, ຄຳສັ່ງແນະນຳ, ຂໍ້ຕົກລົງ, ແຈ້ງການ, ຂໍ້ກຳນົດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການຄ້າດ້ານບໍລິການ.

ມາດຕະການ: ໝາຍເຖິງຂໍ້ກຳນົດສະເພາະໃດໜຶ່ງ ທີ່ມີຜົນບັງຄັບໃຊ້ຕໍ່ກັບຂະແໜງບໍລິການໃດໜຶ່ງ ຫຼື ຫຼາຍຂະແໜງບໍລິການ ໂດຍມີການກຳນົດໄວ້ລະອຽດຈະແຈ້ງເຊິ່ງຜູ້ໃຫ້ບໍລິການໃນຂະແໜງການນັ້ນຕ້ອງໄດ້ປະຕິບັດຕາມ.

ຂັ້ນຕອນ: ໝາຍເຖິງຂັ້ນຕອນ ໃນການດຳເນີນການສ້າງຕັ້ງທຸລະກິດດ້ານການບໍລິການໃດໜຶ່ງ ຫຼື ຂະບວນການດຳເນີນການກ່ຽວກັບ

ແບບຟອມ: ໝາຍເຖິງຕົວຢ່າງຂອງແບບຟອມໃນການສ້າງຕັ້ງທຸລະກິດ ຂອງຂະແໜງບໍລິການໃດໜຶ່ງທີ່ຜູ້ນຳໃຊ້ເວັບໄຊທ໌ ສາມາດດາວໂຫຼດໄປສຶກສາເພີ່ມເຕີມໄດ້.

ນອກຈາກນັ້ນຍັງມີຂໍ້ມູນອື່ນ, ເປັນຕົ້ນແມ່ນ: ຂ່າວ, ປະກາດ, ສິ່ງພິມທີ່ກ່ຽວຂ້ອງກັບການຄ້າດ້ານບໍລິການ.



**ຂໍ້ມູນເພີ່ມເຕີມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມນະໂຍບາຍການຄ້າຕ່າງປະເທດ
ອີເມວ: contact@laoservicesportal.gov.la
ເວັບໄຊ໌: www.laoservicesportal.gov.la
www.laoservicesportal.com
www.laoservicesportal.net
www.laoservicesportal.org
ຈັດພິມຄັ້ງວັນທີ 19 ກໍລະກົດ 2017

**ສະໜັບສະໜູນໂດຍ:**

# ສູນຂໍ້ມູນຂ່າວສານ ທາງດ້ານການຄ້າດ້ານບໍລິການ

Lao Services Portal

www.laoservicesportal.gov.la